## ຄວາມຊຳນານໃນວຽກງານ

**ທ່ານສາມາດໄດ້ຄວາມຮູ້:**

- ປະສົບປະການເຮັດດ້ວຍມືຕົນເອງ
- ຄວາມຊ່ຽວຊານທາງຄອມພິວເຕີ
- ຄຳສັບພະຍາບານ
- ຄວາມຊຳນານນຳການຕິດຕໍ່ພົວພັນ
- ການຂຽນແບບວິຊາການ
- ການຄວບຄຸມນຳເວລາ

## ການຝຶກອົບຮົມ

**ຕົວຢ່າງບາງອັນຂອງການຝຶກອົບຮົມ:**

- ເທັກໂນໂລຈີຂອງກິຈການຄ້າ
- ວິຊາຊີບທາງການພະຍາບານ
- ການຄ້າອຸດສາຫະກັມ
- ການຄ້າຣົດຍົນ
- ຊອບແວຣ໌ແລະການອອກແບບຄອມພິວເຕີ
- ພະແນກສັງຄົມແລະປະຊາຊົນ

ເປັນຜູ້ນຳທີ່ **ເຂັ້ມແຂງ** ຂອງຄອບຄົວຂອງທ່ານ. ສະແດງໃຫ້ລູກຂອງທ່ານເຫັນ **ພະລັງຂອງການສຶກສາ** ແລະທາງເລືອກທີ່ດີທີ່ມັນນຳມາ.


ພະແນກບໍຣິການຊຸມນຸມຊົນ

ພະແນກປົກຄອງດ້ານເສດຖະກິດ

PO Box 45440

Olympia, WA  98504-5440


Washington State
Department of Social
& Health Services

*Transforming lives*


DSHS 22-1579 LA (11/14)


# ການສຶກສາຈ່າຍເງິນໃຫ້!



ຈົ່ງເວົ້າລົມນຳຜູ້ຈັດການເອກສານ **WorkFirst** ຂອງທ່ານກ່ຽວກັບທາງເລືອກເອົາໃນການສຶກສາຂອງທ່ານ.


Washington State
Department of Social
& Health Services

*Transforming lives*



## ຂ້ອຍຈະໄດ້ວຽກ ດີແນວໃດ?

ການໄປເຂົ້າໂຮງຮຽນເປັນເວລາປີນຶ່ງຈະເຮັດໃຫ້ມີຄວາມແຕກຕ່າງອັນໃຫຍ່ຫລວງ. ໃບປະກາດນຶ່ງປີສາມາດຊອກ ວຽກງານທີ່ຈະຈ່າຍເງີນພຽງພໍເພື່ອຈະເບີ່ງແຍງຄອບຄົວ ຂອງທ່ານ.

ໂຄງການສຶກສາຈະມີໄວ້ໃຫ້ເພື່ອຈະຊ່ວຍເຫລືອທ່ານໄດ້ ວຽກທີ່ທ່ານຕ້ອງການ. ຖ້າຫາກວ່າທ່ານໄດ້ຮັບເງີນຊ່ວຍເຫລືອຊົ່ວຄາວສໍາລັບຄອບຄົວຂັດສົນ (TANF), ທ່ານ ສາມາດໄປເຂົ້າຫ້ອງຮຽນໂດຍບໍ່ຄິດຄ່າຕໍ່ທ່ານຊຶ່ງຈະຊ່ວຍ ທ່ານໄດ້ວຽກເຮັດ.ໂຄງການທີ່ນໍາພາໄປເອົາໃບປະກາດ, ແລະ ວຽກງານ, ອາດຈະຖືກລວມເຂົ້າໃສ່ຢູ່ໃນແຜນການ ຮັບຜິດຊອບສ່ວນບຸກຄົນ (IRP) ຂອງທ່ານ. ໂຮງຮຽນຄອມ ເຫລດທ້ອງຖິ່ນຈະຊ່ວຍເຫລືອທ່ານຂໍເອົາການຊ່ວຍເຫລືອ ເງີນທີ່ທ່ານອາດຈະຕ້ອງການສໍາລັບໂຄງການອື່ນ.

ບໍ່ທັນມີໃບປະກົດຈົບຣາຍສະກຸນ ຫລື ໃບປະກາດທຽບເທົ່າ ທົ່ວໄປເທື່ອ?ພວກເຮົາສາມາດຊ່ວຍໄດ້,ແລະມັນເປັນ ບາດກ້າວຂັ້ນທໍາອິດໄປສູ່ການໄດ້ວຽກເຮັດງານທໍາຊຶ່ງຈະ ເບີ່ງແຍງຄອບຄົວຂອງທ່ານ.

### ສົນໃຈໃນການສຶກສາບໍ່?

ຈົ່ງເວົ້າລົມນໍາຜູ້ຈັດການເອກສານ WorkFirst ຂອງທ່ານເພື່ອຈະເບີ່ງວ່າການສຶກສາສາມາດເປັນພາກສ່ວນນຶ່ງຂອງແຜນການຮັບຜິດຊອບສ່ວນບຸກຄົນ (IRP) ຂອງທ່ານໄດ້ ຫລື ບໍ່.

## ຂ້ອຍຈະໄດ້ເງິນ ຫລາຍກວ່າເກົ່າ ໄດ້ແນວໃດ?



ດໍາເນີນການສຶກສາຂອງທ່ານຕໍ່ໄປໃນຂະມະທີ່ທ່ານກໍາ ລັງເຮັດວຽກຢູ່ເພື່ອຈະຍົກຣາຍໄດ້ຂອງທ່ານຂຶ້ນ. ການໄດ້ຮັບການສຶກສາທີ່ທ່ານຕ້ອງການເພື່ອຈະກູ້ມຕົນເອງແມ່ນ ບາດກ້າວຂັ້ນທໍາອິດໃນການບັນລຸເປົ້າຫມາຍຂອງທ່ານ.

ນາງແຄຕີບໍ່ໄດ້ເຮັດວຽກມາສອງປີແລ້ວ ແລະ ບໍ່ໄດ້ເຂົ້າ ໂຮງຮຽນຫລາຍສິບປີແລ້ວ. ໃນຖານະເປັນແມ່ຂອງລູກ ນ້ອຍສອງຄົນນາງເປັນຫ່ວງກ່ຽວກັບການກັບຄືນໄປເຂົ້າໂຮງຮຽນ, ແຕ່ວ່າຮູ້ຈັກວ່າມັນເປັນຫົນທາງດຽວເທົ່ານັ້ນ ທີ່ນາງຈະໄດ້ດີກວ່າເຮັດວຽກໃນຄ່າແຮງງານຕໍ່າສຸດ.

ນາງແຄຕີໄດ້ສໍາເຣັດໃບປະກາດການດໍາເນີນກິຈການຄ້າ ຢູ່ໂຮງຮຽນຄອມເຫລດໃນຊຸມນຸມຊົນທ້ອງຖິ່ນຂອງນາງໃນ ເວລານຶ່ງປີໃນຂະມະທີ່ກໍາລັງໄດ້ຮັບເງີນຊ່ວຍເຫລືອ TANF ຢູ່ເພື່ອຈະຊ່ວຍອູ້ມຊູຄອບຄົວຂອງນາງ.

ດຽວນີ້ນາງແຄຕີກໍາລັງເຮັດວຽກເປັນຕົວແທນຈໍາຫນ່າຍ ປະກັນພັຍ. ນາງຫາເງີນໄດ້ພຽງພໍທີ່ຈະອູ້ມຊູຄອບຄົວຂອງ ນາງໂດຍບໍ່ຕ້ອງມີເງີນ TANF.

ນາງແຄຕີຈະດໍາເນີນການສຶກສາຂອງນາງຕໍ່ໄປໃນຂະມະ ທີ່ນາງເຮັດວຽກຢູ່. ຫ້ອງຮຽນທີ່ນາງເຂົ້າສໍາລັບໃບປະກາດ ຂອງນາງສາມາດຖືກໃຊ້ໃສ່ການຈົບປະຣິນຍາການປົກ ຄອງກິຈການຄ້າຂອງນາງ.

## ວຽກງານຊະນິດໃດແດ່ ທີ່ຂ້ອຍສາມາດຝຶກແອບໄດ້?

ໂຮງຮຽນຄອມເຫລດແຕ່ລະບ່ອນມີໂຄງການຝຶກອົບຮົມ ສໍາລັບວຽກງານທີ່ມີໄວ້ໃຫ້ຢູ່ໃນເຂດຂອງເຂົາເຈົ້າ. ຈົ່ງ ຕິດຕໍ່ຫາໂຮງຮຽນຄອມເຫລດທ້ອງຖິ່ນຂອງທ່ານເພື່ອ ຈະຮູ້ຈັກໂຄງການອັນໃດແດ່ເຫມາະສົມສໍາລັບທ່ານ. ຕົວ ຢ່າງຂອງໂຄງການຝຶກອົບຮົມບາງຢ່າງທີ່ມີໄວ້ໃຫ້ທົ່ວຣັດ ແມ່ນ:

- ຊ່າງຈອດ
- ຜູ້ຊ່ວຍນາຍຫມໍທີ່ມີໃບປະກາດ (NAC)
- ເທັກໂນໂລຈີຂອງຄອມພິວເຕີ
- ຜູ້ຊ່ວຍພະຍາບານ
- ຜູ້ຊ່ວຍທ່ານຫມໍປົວແຂ້ວ
- ການສຶກສາວັຍເດັກແຕ່ເລີ້ມແຮກ
- ການປົກຄອງກິຈການຄ້າ
- ການຕິດຕໍ່ສື່ສານຂ່າວມວນຊົນ
- ຄວາມຍຸຕິທັມທາງກົດຫມາຍອາຍາ
- ການບັນຊີ
- ການສ້ອມແປງຣົດ
- ການຊ່າງ

